# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກໝາກແຕງ(ຂີ້ໄກ່)

(ສະບັບທົດລອງ)



ຂຽນໂດຍ: ນາງ ຈຳປາ ລຸນຈັນທາ

ຂໍ້ມູນຈາກ: ບ້ານ ໂຄກນ້ອຍ ເມືອງ ໄຊທານີ ນະຄອນຫລວງວຽງຈັນ

2006

PDF created with pdfFactory Pro trial version www.pdffactory.com

# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກໝາກແຕງ (ຂີ້ໄກ່)

ຮີບໂຮມ ແລະຈັດໜ້າໂດຍ: ນາງ ກອງມະນີ ຄຳຜາຍ

ຜູ້ແຕ້ມ: ນາງ ສຸດທາລາ

ຜູ້ຮຽບຮຽງ: ອ.ຈ. ໂພໄຊ ຈັນທະວົງສາ

ອ.ຈ. ເກດມະນີ ບັນດາສັກ

ອ.ຈ. ຄຳໄຫວ ອິນທະວົງ

ອ.ຈ. ລັ່ງ ແສງດາລາ

ອ.ຈ. ທອງຂັນ ສີລິໂພຄຳ

ເຈົ້າຂອງ: ພະແນກສຶກສານະຄອນຫລວງວຽງຈັນ ແລະ

ສູນອົບຮົມຮ່ວມພັດທະນາ

Pestalozzi Children's Foundation

A world for Children

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນຫົວນີ້ ໄດ້ມາຈາກການຂຽນຂອງຊາວບ້ານ ແລະອາສາສະໝັກເຊິ່ງໄດ້ຮຽບຮຽງເບື້ອງຕົ້ນຈາກຄະນະອຳນວຍການ ສູນອົບຮົມຮ່ວມພັດທະນາ ແລະພະແນກສຶກສານະຄອນຫຼວງວຽງຈັນ

ປື້ມຫົວນ້ອຍຫົວນີ້ໄດ້ບັນຈຸເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາ ແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນປະຖົມ ປໍ 1 ປໍ 2 ແລະບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ

ຄະນະຈັດທຳຫວັງຄິດວ່າປື້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ບໍ່ທັນພຽງພໍ ແລະຂາດໄປ ຫວັງວ່າຄົງໄດ້ຮັບການຕິຊົມຈາກທຸກທ່ານ ພວກເຮົາພ້ອມທີ່ຈະປັບປຸງຕາມຄວາມເໝາະສົມ

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ສາລະໜ້າຮູ້

ການປູກໝາກແຕງແມ່ນມີມາແຕ່ດົນນານແລ້ວໂດຍສະເພາະແມ່ນໝາກແຕງຂີ້ໄກ່ກ່ອນເພິ່ນຈະຮ້ອງວ່າໝາກແຕງຂີ້ໄກ່ກໍເພາະວ່າໝາກແຕງຊະນິດນີ້ເວລາປູກເຮົາຕ້ອງໃສ່ຝຸ່ນຂີ້ໄກ່ມັນຈຶ່ງງາມ ແລະເປັນໝາກດົກໜາສະນັ້ນເພິ່ນຈຶ່ງພາຮ້ອງໝາກແຕງຊະນິດນີ້ວ່າ ໝາກແຕງຂີ້ໄກ່

## ອຸປະກອນ

1. ຈົກ



2. ຊວ້ານຫຼືສຽມ



PDF created with pdfFactory Pro trial version www.pdffactory.com

3. ແກ່ນໝາກແຕງ



4. ຜ້າ (ໄວ້ສຳລັບຫໍ່ແກ່ນໝາກແຕງ)



5. ຂີ້ແກບ



PDF created with pdfFactory Pro trial version www.pdffactory.com

6. ຂີ້ໄກ່ແຫ້ງ



7. ບົວຫົດນໍ້າ



8. ໄມ້ສຳລັບເຮັດຄ້າງໝາກແຕງ



PDF created with pdfFactory Pro trial version www.pdffactory.com

<u>ຂັ້ນຕອນການປູກໝາກແຕງ</u>

1. ຂຸດດິນແລ້ວທຸບໃຫ້ມຸ່ນ, ຄູນດິນເປັນຄູຂຶ້ນສູງປະມານ 2 ຄືບ ແລ້ວຊ້ວະ ໃຫ້ເປັນຮ່ອງ ເລິກປະມານ 10 ຊັງຕີແມັດ



2. ເອົາແກ່ນໝາກແຕງມາແຊ່ນ້ຳແລ້ວປະໄວ້ປະມານ 1 ຄືນຈາກນັ້ນ ມັນຈະແຕກໜໍ່ອອກມາ



PDF created with pdfFactory Pro trial version www.pdffactory.com

3. ນຳເອົາແກ່ນໝາກແຕງນັ້ນໄປປູກໃສ່ຮ່ອງທີ່ຂຸດໄວ້ ໂດຍໃສ່ 3-4 ແກ່ນຫ່າງກັນປະມານ 1 ຄືບແລ້ວເອົາແກບປົກໃສ່ 1 ກຳ ຫົດນ້ຳໃຫ້ຊຸ່ມ



4. ເມື່ອເບ້ຍໝາກແຕງປົ່ງພົ້ນແກບຂຶ້ນມາໄດ້ໄລຍະໜຶ່ງແລ້ວ, ເຮົາກໍເອົາຂີ້ໄກ່ແຫ້ງມາໂຮຍໃສ່ພໍປະມານໂດຍຢາຍອ້ອມຫ່າງຈາກຕົ້ນປະມານ 1-2 ຂໍ້ມື (ຖ້າຝຸ່ນຂີ້ໄກ່ຖືກພິດໂດຍກົງມັນກໍຈະຕາຍງ່າຍ)



PDF created with pdfFactory Pro trial version www.pdffactory.com

5. ການໃສ່ຝຸ່ນຂີ້ໄກ່ຕ້ອງໃສ່ເປັນໄລຍະ, ຖ້າສັງເກດວ່າໃສ່ແລ້ວໄລຍະໜຶ່ງ (ຫຼາຍມື້) ຕົ້ນໝາກແຕງຍັງບໍ່ທັນໃຫຍ່ກໍໃຫ້ໃສ່ຕື່ມອີກ



6. ໃນເມື່ອໝາກແຕງຫາກປົ່ງໃບໄດ້ປະມານ 3-4 ໃບແມ່ນເຮົາຈະໄດ້ເຮັດຄ້າງໃສ່ເພື່ອບໍ່ໃຫ້ເຄືອໝາກແຕງເລືອໄປຕາມພື້ນດິນ



PDF created with pdfFactory Pro trial version www.pdffactory.com

## ຫຼັກການທີ່ສຳຄັນ

ການໃຊ້ຜ້າຫໍ່ແກ່ນໝາກແຕງແມ່ນເພື່ອເຮັດໃຫ້ແກ່ນໝາກແຕງຊຸ່ມພ້ອມນັ້ນຍັງເຮັດໃຫ້ອຸ່ນທະພູມເພີ່ມຂຶ້ນພາໃຫ້ແກ່ນໝາກແຕງງອກໄວ

## ຄູນປະໂຫຍດຂອງໝາກແຕງ

ໝາກແຕງເປັນຜັກທີ່ມີຄູນປະໂຫຍດຕໍ່ຮ່າງກາຍເຊິ່ງເຮົາສາມາດນຳມາປຸງແຕ່ງອາຫານໄດ້ຫຼາຍຊະນິດ, ພ້ອມນັ້ນຍັງເປັນການສົ່ງເສີມການຜະລິດເພື່ອສ້າງລາຍໄດ້ນຳອີກ

**ກາບ:** ການປູກໝາກແຕງ

| | |
|---|---|
| ຢູ່ບ້ານຂ້ອຍ | ເຮັດສວນໝາກແຕງ |
| ຍາມຕອນແລງ | ໄຖດິນໃຫ້ມຸ່ນ |
| ແລ້ວເຮົາຄູນ | ເປັນຄູໃຫ້ສູງ |
| ຈາກນັ້ນລຸງ | ຈຶ່ງຊິວະເປັນຮ່ອງນະ |
| ແລ້ວຈັບຈອງ | ເອົາໃນໝາກແຕງ |
| ຍາມຕອນແລງ | ເອົາແຊ່ລົງນ້ຳ |
| ຄັດເລືອກຊ້ຳ | ໃນລີບອອກກ່ອນ |
| ແລ້ວຈຶ່ງປ່ອນ | ຝັງລົງໃສ່ດິນ |

PDF created with pdfFactory Pro trial version www.pdffactory.com

## ເຊີ້ງ: ມາເຮັດສວນໝາກແຕງ

ໂຮ.......................ຮິວ

| | |
|---|---|
| ມາພວກເຮົາມາ | ເຮັດສວນນຳກັນ |
| ພ້ອມກັນຂະຫຍັນ | ໝັ່ນພຽນຢ່າຄ້ານ |
| ເພື່ອເປັນການຕ້ານ | ໄພຄວາມອຶດຢາກ |
| ຈະບໍ່ລຳບາກ | ເຮັດໃຫ້ຫຼາຍໆ |
| ແລ້ວນຳໄປຂາຍ | ສິ່ງເປັນສິນຄ້າ |
| ໃຫ້ຄົນເຂົາຊ່າ | ວ່າບ້ານປູກຝັງ |
| ມັນມີພ້ອມທັງ | ໝາກແຕງຂີ້ໄກ່ |
| ໜ່ວຍມັນບໍ່ໃຫຍ່ | ພໍດີພໍງາມ. |

**ເພງ:** ໝາກແຕງບ້ານຂ້ອຍ

| | |
|---|---|
| ບ້ານຂ້ອຍມີ | ໝາກແຕງຂີ້ໄກ່ |
| ຄົນເອົາໄປ | ຕຳຢູ່ຕຳກິນ |
| ຫຼານເອງ | ກໍເຄີຍໄດ້ຍິນ (*2) |
| ເອົາມາຕຳກິນ | ນັ້ນແຊບອີ່ຫຼີ |
| ໜ່ວຍໝາກແຕງ | ໜ່ວຍມັນບໍ່ໃຫຍ່ |
| ໝາກແຕງຂີ້ໄກ່ | ນັ້ນມີຫຼາຍສີ |
| ໜ່ວຍຂຽວ | ໜ່ວຍຂາວກໍມີ (*2) |
| ໝາກແຕ່ງພັນນີ້ | ມີຢູ່ບ້ານເຮົາ (*2) |

PDF created with pdfFactory Pro trial version www.pdffactory.com

**ລຳ:** ງາມໝາກແຕງ

ໝາກແຕງເອີຍ ໝາກແຕງມັນໜ່ວຍນ້ອຍ
ລົມວອຍໆ ພັດໃບຢູ່ເວີ່ງໆ
ຍາມຫຼຽວເບິ່ງ ມັນຂຽວແທ້
ຈັ່ງແມ່ນງາມ ໝາກແຕງເອີຍ ລະນາ...
ໝາກແຕງ ໝາກແຕງບ້ານເຮົາ
ຄືນກ່າວເວົ້າ ວ່າງາມແທ້ນາ
ຄິດຮອດລຸງອາວອາ ຈາກບ້ານມາຍັງຈື່ຈຳບໍ່ລືມ
ບໍ່ລືມໄຮ່ນາເຄີຍດຳ ຈື່ຈຳການປູກມາກແຕງ
ທີ່ມີປ້າລຸງຄຳແພງ ປູກໝາກແຕງຂີ້ໄກ່ບ້ານເຮົາ
ວັນຄືນເສົ້າ ເຫງົາໃຈອຸກອັ່ງ (ຊ້ຳ)
ພາບຄວາມຫຼັງວ່ານັ້ນ ຈຳໝັ້ນຂູແນວ
ຄິດບໍ່ແລ້ວ ນຳບ້ານເກົ່າຄາວຫຼັງ
ໄປຢູ່ວຽງວັງໃດ ກໍບໍ່ຄືຢູ່ບ້ານໂຄກນ້ອຍ

PDF created with pdfFactory Pro trial version www.pdffactory.com

## ຮູບ ແລະປະຫວັດຂອງຜູ້ຂຽນ



ຊື່ ນາງ ຈຳປາ ລຸນຈັນທາ

ອາຍຸ 30 ປີ, ອາຊີບ ພະນັກງານ

**ເຫດຜົນຂອງການຂຽນຫົວຂໍ້ນີ້:**

ເພື່ອຢາກໃຫ້ນັກຮຽນໄດ້ຮຽນຮູ້ກ່ຽວກັບການປູກໝາກແຕງຂີ້ໄກ່ ເຊິ່ງຂ້າພະເຈົ້າຄິດວ່າບົດຮຽນອັນນີ້ ຄົງຈະປູກຈິດສຳນຶກໃຫ້ແກ່ນັກຮຽນໃຫ້ຮັກການອອກແຮງງານ ກໍຄືວຽກງານກະສິກຳໃຫ້ໄປນຳໃຊ້ໃນອານາຄົດ

PDF created with pdfFactory Pro trial version www.pdffactory.com